

# "ການປ່ຽນແປງ" ແລະ "ບໍ່ປ່ຽນແປງ" ຂອງພູຈິງມ້າຍຊານ

ວັນທີ 17 ກັນຍາ 2023, ໂຄງການ "ແຫຼ່ງທ່ອງທ່ຽວວັດທະນະທຳຂອງ ປ່າຊາບູຮານພູຈິງມ້າຍຊານ" ຖືກຈັດເຂົ້າໃນບັນຊີລາຍຊື່ມໍລະດົກໂລກ ຊຶ່ງໄດ້ກາຍເປັນມໍລະດົກໂລກແຫ່ງທີ 57 ຂອງຈີນ ແລະ ກໍແມ່ນມໍລະດົກວັດທະນະທຳໂລກ ທີ່ເນັ້ນໃສ່ຫົວຂໍ້ຊາແຫ່ງທຳອິດໃນທົ່ວໂລກ. ໃນໜຶ່ງປີຜ່ານມາ, ພູຈິງມ້າຍຊານໄດ້ປະກົດຄວາມມີຊີວິດຊີວາໃໝ່, ບໍ່ພຽງແຕ່ໄດ້ສ້າງມູນຄ່າການຜະລິດລວມດ້ານອຸດສາຫະກຳຊາທັງໝົດ 517 ລ້ານຢວນ ແລະ ເພີ່ມຂຶ້ນ 31,55% ເມື່ອທຽບໃສ່ໄລຍະດຽວກັນຂອງປີກາຍເທົ່ານັ້ນ, ແຕ່ຍັງໄດ້ດຶງດູດນັກທ່ອງທ່ຽວຈຳນວນຫຼວງຫຼາຍ ມາສຳຜັດກັບຄວາມມີສະເໜ່ຂອງການເຊື່ອມໂຍງ ລະຫວ່າງການພັດທະນາຂະແໜງການທ່ອງທ່ຽວ ແລະ ການພັດທະນາອຸດສາຫະກຳຊາ. ໃນພາກນີ້, ພວກເຮົາຈະກ້າວເຂົ້າສູ່ພູຈິງມ້າຍຊານ ແລະ ຮັບຮູ້ເຖິງ "ການປ່ຽນແປງ" ແລະ "ບໍ່ປ່ຽນແປງ" ຂອງຜືນແຜ່ນດິນບູຮານແຫ່ງນີ້.

## ການປົກປ້ອງສິ່ງທີ່ບໍ່ປ່ຽນແປງ ແລະ ກິ່ນຫອມຂອງໃບຊາ

ພູຈິງມ້າຍຊານ ຕັ້ງຢູ່ຕາແສງຮຸ້ຍມິນ ເມືອງປົກຄອງຕົນເອງ ເຜົ່າລາຫູ ລ້ານຊ້າງ ນະຄອນຜູເອີ ແຂວງຢຸນນານ ສປ ຈີນ. ພູຊາບູຮານແຫ່ງນີ້ ສະເລ່ຍແລ້ວ ສູງຈາກລະດັບໜ້ານ້ຳທະເລ 1.400 ແມັດ, ມີປ່າໄມ້, ສວນຊາບູຮານ ແລະ ໝູ່ບ້ານສະຫຼັບສັບຊ້ອນກັນ. ສວນຊາບູຮານແຫ່ງນີ້ ມີປະຫວັດສາດຫຼາຍກວ່າພັນປີ, ເປັນຕົວແທນຂອງສວນຊາປູກ ທີ່ໄດ້ຮັກສາໄວ້ຢ່າງຄົບຖ້ວນກວ່າໝູ່, ມີເນື້ອທີ່ກວ້າງໃຫຍ່ ແລະ ມີປະຫວັດການປູກມາເປັນເວລາດົນນານທີ່ສຸດໃນໂລກ. ໃນນັ້ນ, ສວນຊາ ທີ່ມີເນື້ອທີ່ກວ້າງທີ່ສຸດມີເຖິງ 1.200 ກວ່າເຮັກຕາ.

ພາຍຫຼັງຝົນຕົກຫຼາຍຄັ້ງໃນລະດູໃບໄມ້ຫຼົ່ນ, ຕົ້ນຊາບູຮານຢູ່ພູຈິງມ້າຍຊານ ໄດ້ເກີດໜໍ່ຈໍ່ແໜງໃໝ່, ລະດູການເກັບໃບຊາ ໃນລະດູໃບໄມ້ຫຼົ່ນ ກໍໄດ້ໝູນວຽນມາເຖິງແລ້ວ. ມື້ທີ່ມີທ້ອງຟ້າປອດໂປ່ງສົດໃສ, ນາງ ເຢ້ພ້າຊຽນ (Yue Pa xian) ແລະ ເອື້ອຍນ້ອງຂອງບ້ານຈິງມ້າຍ ຕາແສງຮຸ້ຍມິນ ກໍໄດ້ເປ້ກະຕ່າຊາ, ຂີ່ລົດຈັກ, ໄປເກັບຊາ ລະດູໃບໄມ້ຫຼົ່ນ ຢ່າງເບີກບານມ່ວນຊື່ນຢູ່ເທິງພູຈິງມ້າຍຊານ.

ນາງ ເຢ້ພ້າຊຽນ ກ່າວວ່າ: ຫຼັງຈາກຖືກຈັດເຂົ້າໃນບັນຊີລາຍຊື່ມໍລະດົກໂລກຢ່າງສຳເລັດຜົນ, ນັກທ່ອງທ່ຽວແລະນັກທຸລະກິດຄ້າຂາຍຊາ ໄດ້ເດີນທາງມາຮອດພູຈິງມ້າຍຊານ ນັບມື້ນັບຫຼາຍຂຶ້ນ, ຊຶ່ງໄດ້ເພີ່ມລາຍຮັບຂອງຊາວບ້ານຢ່າງຕໍ່ເນື່ອງ, ແຕ່ຖ້າຫາກວ່າພວກເຮົາ ບໍ່ອະນຸລັກຮັກສາພູຈິງມ້າຍຊານ ຄືບັນພະບຸລຸດຮຸ່ນຕໍ່ຮຸ່ນແລ້ວ, ຊີວິດທີ່ສຸກສັນໃນສູ່ມື້ນີ້ ກໍຈະສູນເສຍໄປໃນວັນໃດວັນໜຶ່ງ. ເຖິງແມ່ນວ່າຊ່ອງທາງຂາຍໃບຊາ ໄດ້ນັບມື້ນັບເປີດກວ້າງ, ແຕ່ຊາວບ້ານຍັງຄົງຮັກສາລະບຽບການເກັບໃບຊາຄື ການເກັບໃບຊາແມ່ນເກັບໃນລະດູບານໃໝ່ ແລະ ລະດູໃບໄມ້ຫຼົ່ນເທົ່ານັ້ນ, ເພື່ອຮັກສາບຳລຸງຕົ້ນຊາໃນລະດູຮ້ອນ ແລະ ລະດູໜາວ.

ນາງ ເວີ້ຍຊີຟັງ (Wei Qi fang) ປະທານສະຫະພັນແມ່ຍິງບ້ານຈິງມ້າຍ ເປັນສັກຂີພິຍານໃຫ້ແກ່ການສະໝັກເປັນມໍລະດົກໂລກຢ່າງສຳເລັດຜົນຂອງພູຈິງມ້າຍຊານ, ນາງ ມີຄວາມຮູ້ສຶກຢ່າງເລິກຊຶ້ງ ຕໍ່ "ການປ່ຽນແປງ" ແລະ "ບໍ່ປ່ຽນແປງ" ຂອງພູຈິງມ້າຍຊານ. ນາງ ກ່າວວ່າ: ຕົ້ນຊາ ແລະ ສວນຊາ ຍັງງອກງາມຄືເກົ່າ, ເຮືອນຊານບ້ານຊ່ອງ ກໍຍັງຮັກສາໄດ້ຄືແບບດັ້ງເດີມ, ສີມືການປຸງແຕ່ງຊາແບບດັ້ງເດີມໄດ້ສືບທອດກັນຮຸ່ນຕໍ່ຮຸ່ນ. ການຜະລິດ ແລະ ການດຳລົງຊີວິດຂອງຊາວບ້ານ ທີ່ໄດ້ປິ່ນອ້ອມຕົ້ນຊາ ແລະ ການພົວພັນ ລະຫວ່າງ ຄົນກັບພູເຂົາ ບໍ່ໄດ້ມີການປ່ຽນແປງ, ສິ່ງທີ່ "ບໍ່ປ່ຽນແປງ" ເຫຼົ່ານີ້ ແມ່ນໝາກຜົນຈາກການປົກປັກຮັກສາຕົ້ນຊາ.

ທ່ານ ຈ່າງພີ່ເສີງ (Zhang Pisheng) ຫົວໜ້າຫ້ອງການຄຸ້ມຄອງສວນຊາບູຮານພູຈິງມ້າຍຊານ ກ່າວວ່າ: ການສະໝັກເປັນມໍລະດົກໂລກ ຢ່າງສຳເລັດຜົນ. ໝາຍຄວາມວ່າພວກເຮົາ ມີຄວາມຮັບຜິດຊອບຫຼາຍກວ່າເກົ່າ ແລະ ເຮົາຄວນປະຕິບັດມາດຕະຖານສູງກວ່າເກົ່າໃນການປົກປັກຮັກສາພູຈິງມ້າຍຊານ. ໂດຍຜ່ານການວາງລະບຽບການ, ວິທີການດຳເນີນງານ ແລະ ການຕິດຕາມແບບວິທະຍາສາດ ໄດ້ສ້າງລະບົບການປົກປັກຮັກສາພູຈິງມ້າຍຊານ ທີ່ນັບມື້ນັບສົມບູນຂຶ້ນ.

## ຊີວິດທີ່ນັບມື້ນັບດີຂຶ້ນ

ໃນໜຶ່ງປີຜ່ານມາ, ຍ້ອນວ່າ ພູຈິງມ້າຍຊານຖືກຈັດເຂົ້າໃນບັນຊີລາຍຊື່ມໍລະດົກວັດທະນະທຳໂລກ, ໄດ້ມີນັກທ່ອງທ່ຽວເຂົ້າມາທ່ຽວຊົມພູຈິງມ້າຍຊານນັບມື້ນັບຫຼາຍຂຶ້ນ ແລະ ເລີ່ມຕົ້ນ "ການທ່ອງທ່ຽວແບບສະບາຍ" ແລະ "ການທ່ອງທ່ຽວແບບໃກ້ຊິດກັບທຳມະຊາດ" ຢູ່ພູຈິງມ້າຍຊານ ຊຶ່ງກໍໄດ້ເພີ່ມກຳລັງຂັບເຄື່ອນໃໝ່ໃຫ້ແກ່ການພັດທະນາອຸດສາຫະກຳຊາພູຈິງມ້າຍຊານ.

"ລາຍຮັບຈາກການຂາຍຊາມີເຖິງ 150.000 ຢວນ, ລາຍຮັບຮ້ານອາຫານ ແມ່ນ 170.000 ຢວນ, ແລະ ລາຍຮັບຈາກໃຫ້ການບໍລິການນັກທ່ອງທ່ຽວ ແມ່ນ 20.000 ຢວນ..." ຫຼັງຈາກຄິດໄລ່ລາຍຮັບຂອງປີທີ່ຜ່ານມາ, ນາງ ເອີແຄນ (Er'ken) ແມ່ຍິງເຜົ່າປູ້ລາງໃນບ້ານມາງຈິງ ໄດ້ຍິ້ມຫົວແບບມີຄວາມສຸກ. ຄອບຄົວຂອງນາງ ໄດ້ເປີດໂຮງແຮມແຫ່ງໜຶ່ງຢູ່ພູຈິງມ້າຍຊານ ແລະ ມີສວນຊາບູຮານ 1,86 ເຮັກຕາ. ນອກຈາກນັ້ນ, ນາງ ຍັງໄດ້ສ້າງທີມງານທ້ອງຖິ່ນທີ່ມີສະມາຊິກ 5 ຄົນ ເພື່ອຕ້ອນຮັບນັກທ່ອງທ່ຽວ ແລະ ໄດ້ເປີດຮ້ານເຊົ່າເຄື່ອງນຸ່ງຊົນເຜົ່າສ່ວນໜ້ອຍ.

ນາງ ເອີແຄນ ກ່າວຕື່ມວ່າ: ໃນເມື່ອກ່ອນ ຊາວບ້ານໄດ້ຂາຍໃບຊາເປັນຕົ້ນຕໍ, ນັບແຕ່ປີກາຍນີ້ເປັນຕົ້ນມາ ຊາວໜຸ່ມທີ່ອອກໄປເຮັດວຽກຢູ່ຕ່າງແຂວງໄດ້ກັບຄືນມາບ້ານເກີດຂອງຕົນ, ພວກເຂົາເຈົ້າ ທະຍອຍກັນເປີດຣີສອດ, ຮ້ານຊາ ຫຼື ຮ້ານອາຫານ ໂດຍມີການເປີດໄລສົດ ທາງອິນເຕີເນັດ ການຈຳໜ່າຍຊາບູຮານ ແລະ ຜະລິດຕະພັນກະສິກຳຂອງພູຈິງມ້າຍຊານ ໄປທົ່ວປະເທດຈີນ ໂດຍຜ່ານທາງອິນເຕີເນັດ, ເຮັດໃຫ້ລາຍຮັບຂອງທຸກຄົນໄດ້ເພີ່ມຂຶ້ນຫຼາຍເທົ່າ.

ມີຊາວບ້ານຫຼາຍຄົນກໍຄືກັນກັບ ນາງ ເອີແຄນ, ເຂົາເຈົ້າ ສາມາດສ້າງຄວາມຮັ່ງມີຢູ່ໃນບ້ານຕົນ. ນັບແຕ່ ເດືອນກັນຍາ 2023 ເປັນຕົ້ນມາ, ພູຈິງມ້າຍຊານ ໄດ້ຕ້ອນຮັບນັກທ່ອງທ່ຽວທັງໝົດ 402.000 ເທື່ອຄົນ ແລະ ສ້າງລາຍຮັບດ້ານການທ່ອງທ່ຽວບັນລຸ 338 ລ້ານຢວນ.

ທ່ານ ຢິນອີຮານ (Yin Yiran), ຜູ້ຕາງໜ້າສະຫະກອນໃບຊາປູ້ໄຕ ຈິງມ້າຍ ລ້ານຊ້າງ ແນະນຳໃຫ້ຮູ້ວ່າ: ນອກຈາກໄດ້ສືບທອດ ແລະ ປົກປັກຮັກສາສວນຊາແລ້ວ, ເຂົາເຈົ້າພວມຊອກຫາວິທີການປຸງແຕ່ງຊາທີ່ທັນສະໄໝ, ປັບປຸງຄຸນນະພາບຂອງໃບຊາ ໃຫ້ດີຂຶ້ນຢ່າງຕໍ່ເນື່ອງ, ພ້ອມທັງເປີດເສັ້ນທາງພັດທະນາໃໝ່ໂດຍເອົາການພັດທະນາຂະແໜງການຊາເຊື່ອມໂຍງເຂົ້າກັບການພັດທະນາຂະແໜງການທ່ອງທ່ຽວ; ນຳໃຊ້ຮູບແບບ "ສວນຊາ + ການສຳຜັດ + ການທ່ອງທ່ຽວແບບຮຽນຮູ້" ເພື່ອພັດທະນາການທ່ອງທ່ຽວ ຊົນນະບົດ ແລະ ຍົກມູນຄ່າເພີ່ມຂອງຊາພູຈິງມ້າຍຊານ ໃຫ້ສູງຂຶ້ນ.

(ແຫຼ່ງຂ່າວ: ໜັງສືພິມລາຍວັນຢຸນນານ, ເວັບໄຊໜັງສືພິມລາຍວັນຈີນ, ການຖະແຫຼງຂ່າວນະຄອນຜູເອີ)

(ສະໜອງຂໍ້ມູນໂດຍ: ສູນການສື່ສານສາກົນພາກພື້ນອາຊີໃຕ້-ອາຊີຕາເວັນອອກສ່ຽງໃຕ້ ແຂວງຢຸນນານ)



- ແຫຼ່ງທ່ອງທ່ຽວວັດທະນະທຳສວນຊາບູຮານພູຈິງມ້າຍຊານ ລວມມີສວນຊາບູຮານໃຫຍ່ 5 ແຫ່ງ ທີ່ໄດ້ຮັບການປົກປັກຮັກສາໄວ້ຢ່າງຄົບຖ້ວນ ແລະ 9 ບ້ານບູຮານ, ພ້ອມທັງມີປ່າໄມ້ຂັ້ນສວນຊາ 3 ຜືນ. ເນື້ອທີ່ເຂດມໍລະດົກດັ່ງກ່າວ ມີທັງໝົດ 19.095,74 ເຮັກຕາ, ໃນນັ້ນມີເນື້ອທີ່ເຂດມໍລະດົກ 7.167,89 ເຮັກຕາ ແລະ ເຂດປ້ອງກັນໄພ 11.927,85 ເຮັກຕາ.

- ຢູ່ໃນສວນຊາພູຈິງມ້າຍຊານມີຕົ້ນຊາທີ່ມີອາຍຸຫຼາຍກວ່າ 50 ປີ ແມ່ນມີຫຼາຍກວ່າ 3 ລ້ານຕົ້ນ, ໃນນັ້ນມີ ຕົ້ນຊາ ທີ່ມີອາຍຸຫຼາຍກວ່າ 100 ປີ ມີຈຳນວນຫຼາຍກວ່າ 1 ລ້ານຕົ້ນ.

- ມີ 9 ບ້ານ ທີ່ກະຈາຍຢູ່ໃນສວນຊາພູຈິງມ້າຍຊານ. ໃນນັ້ນ, ມີເຮືອນພື້ນເມືອງ ທັງໝົດ 531 ຫຼັງ ແລະເຮືອນບູຮານ ທີ່ເປັນວັດຖຸບູຮານລະດັບຊາດ ທີ່ໄດ້ຮັບການປົກປັກຮັກສາເປັນພິເສດນັ້ນ ມີ 317 ຫຼັງ..



ynzhanba@163.com
laos.yunnangateway.com